ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານນາຍົກລັດຖະມົນຕີ**

ເລກທີ 229 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 03.10.2006

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍການສຶກສາແຫ່ງຊາດ ເລກທີ 03/ສພຊ, ລົງວັນທີ 8 ເມສາ 2000.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 69/ນຍ, ລົງວັນທີ 24 ມີນາ 2005 ວ່າດ້ວຍການຮັບຮອງເອົາ ແຜນປະຕິບັດງານແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ 2003-2015.
- ອີງຕາມການສະເໜີ ຂອງກະຊວງສຶກສາທິການ ສະບັບເລກທີ 676/ສສ/06, ລົງວັນທີ 19 ກັນຍາ 2006.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດພາລະບົດບາດ, ໜ້າທີ່ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການດັ່ງກ່າວ ແນໃສ່ສ້າງຄວາມເຂັ້ມແຂງ, ຄວາມອາດສາມາດໃຫ້ແກ່ຄະນະກຳມາທິການ ໃນການປຸກລະດົມ ສົ່ງເສີມ ອົງການຈັດຕັ້ງມະຫາຊົນ ແລະ ສັງຄົມ ກໍຄືປະເທດ ເຂົ້າໃນການຜັນຂະຫຍາຍແຜນປະຕິບັດງານແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນໃຫ້ສຳເລັດຜົນ ຕາມຄາດໝາຍໄດ້ ໃນປີ 2015.

## ໝວດທີ່ II
## ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ຊຽນຫຍໍ້ເປັນໂຕອັກສອນລາວວ່າ " ຄສຄຊ " ເປັນອົງການຈັດຕັ້ງຂອງລັດຖະບານ ທີ່ເຄື່ອນໄຫວບໍ່ປະຈຳການ, ມີພາລະບົດບາດຊ່ວຍລັດຖະບານ ແລະ ນາຍົກລັດຖະມົນຕີ ໃນດ້ານວຽກງານ ກ່ຽວກັບການສຶກສາຂັ້ນພື້ນຖານເພື່ອທຸກຄົນ, ໂດຍສະເພາະແມ່ນການປຸກລະດົມຂົນຂວາຍທຶນຮອນ ແລະ ການປະກອບສ່ວນ ເຂົ້າໃນວຽກງານການສຶກສາຂັ້ນພື້ນຖານ ທັງໃຫ້ແກ່ການສຶກສາຂັ້ນພື້ນຖານ ເພື່ອທຸກຄົນ.

## ໝວດທີ່ III
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ມີໜ້າທີ່ຕົ້ນຕໍດັ່ງນີ້:

1. ປະກອບຄຳເຫັນ, ແນະນຳ ຫຼື ສະເໜີ ໃຫ້ກະຊວງສຶກສາທິການ ກ່ຽວກັບການກຳນົດນະໂຍບາຍ, ວາງແຜນຍຸດທະສາດ, ແຜນການ ແລະ ໂຄງການຕ່າງໆ ໃນແຕ່ລະໄລຍະ ເພື່ອຜົນສຳເລັດ ຂອງແຜນປະຕິບັດງານແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ແຕ່ປີ 2003-2015.
2. ຈັດຕັ້ງການຄົ້ນຄວ້າ ເພື່ອຮັບຮອງເອົາແຜນດັ່ງກ່າວ ຕາມການສະເໜີຂອງກະຊວງສຶກສາທິການ.
3. ສະເໜີລັດຖະບານ ຫຼື ນາຍົກລັດຖະມົນຕີ ເພື່ອອອກກົດໝາຍ ຫຼື ນິຕິກຳອື່ນໆ ທີ່ຈຳເປັນໃຫ້ແກ່ການສຶກສາເພື່ອທຸກຄົນ.
4. ເປັນໃຈກາງໃນການຊີ້ນຳພົວພັນ, ປະສານງານກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ຕ່າງປະເທດ ເພື່ອຜັນຂະຫຍາຍແຜນປະຕິບັດງານແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ.
5. ສົ່ງເສີມການລົງທຶນຂອງພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ການສຶກສາຂັ້ນພື້ນຖານ.

**ມາດຕາ 4. ຂອບເຂດສິດ**

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ມີສິດດັ່ງນີ້:

1. ລະດົມທຸກກຳລັງໃນສັງຄົມ ເພື່ອປະກອບສ່ວນໃຫ້ແກ່ພາລະກິດ ການສຶກສາຂັ້ນພື້ນຖານ

ເພື່ອທຸກຄົນ ໂດຍສະເພາະແມ່ນທຶນຮອນ, ການລະດົມລູກຫຼານໃຫ້ເຂົ້າໂຮງຮຽນ, ຮຽນໃຫ້ຈົບ ຊັ້ນປະຖົມເປັນຢ່າງຕ່ຳ ໂດຍສະເພາະ ແມ່ນໃນບັນດາເຂດທີ່ຢູ່ຫ່າງໄກ ສອກຫຼີກທຸກຍາກ.

2. ພົວພັນ, ປະສານງານ, ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ ກັບບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ໃນປະເທດ ກໍຄືກັບຕ່າງປະເທດ ເພື່ອເຮັດໃຫ້ແຜນປະຕິບັດງານແຫ່ງຊາດ ກ່ຽວກັບການສຶກສາເພື່ອໝົດທຸກຄົນ ໃຫ້ບັນລຸຜົນເປັນຈິງຕາມຄາດໝາຍ.

3. ແຕ່ງຕັ້ງຄະນະກຳມະການ ການສຶກສາເພື່ອທຸກຄົນຂັ້ນແຂວງ ແລະ ຊີ້ນຳບັນດາແຂວງ (ເຈົ້າແຂວງ) ເພື່ອແຕ່ງຕັ້ງຄະນະກຳມະການການສຶກສາເພື່ອທຸກຄົນຂັ້ນເມືອງ ແລະ ກຳມະການ ພັດທະນາການສຶກສາຂັ້ນບ້ານ.

## ໝວດທີ່ IV
## ໂຄງປະກອບການຈັດຕັ້ງ

### ມາດຕາ 5. ໂຄງປະກອບບຸກຄະລາກອນ

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ປະກອບດ້ວຍບັນດາທ່ານດັ່ງລຸ່ມນີ້:

1. ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ເປັນປະທານ;
2. ທ່ານ ລັດຖະມົນຕີວ່າການ ກະຊວງສຶກສາທິການ ເປັນຮອງປະທານ;
3. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນຮອງປະທານ;
4. ທ່ານ ຮອງປະທານຄະນະກຳມະການແຜນການ ແລະ ການລົງທຶນ ເປັນຮອງປະທານ;
5. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ເປັນກຳມະການ;
6. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ ເປັນກຳມະການ;
7. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;
8. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເປັນກຳມະການ;
9. ທ່ານ ຮອງປະທານສະຫະພັນແມ່ຍິງລາວ ເປັນກຳມະການ;
10. ທ່ານ ຮອງເລຂາຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ ເປັນກຳມະການ;
11. ທ່ານ ຮອງປະທານສະຫະພັນກຳມະບານລາວ ເປັນກຳມະການ;
12. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
13. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ (ຜູ້ຊີ້ນຳກອງເລຂາ) ເປັນກຳມະການ ແລະ ເປັນເລຂາທິການ.

**ມາດຕາ 6. ໂຄງປະກອບກົງຈັກຊ່ວຍວຽກ**

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ມີກົງຈັກຊ່ວຍວຽກຂອງຕົນ ເອີ້ນວ່າ ກອງເລຂາ ຊຶ່ງປະກອບດ້ວຍບັນດາຫົວໜ້າ ແລະ ຮອງຫົວໜ້າກົມ ຂອງກະຊວງສຶກສາທິການ :

1. ທ່ານ ຫົວໜ້າກົມສາມັນສຶກສາ ເປັນຫົວໜ້າ ທັງເປັນຜູ້ປະສານງານແຫ່ງຊາດ;
2. ທ່ານ ຫົວໜ້າກົມແຜນການ ແລະ ການຮ່ວມມື ເປັນຮອງ ທັງເປັນຮອງຜູ້ປະສານງານແຫ່ງຊາດ;
3. ທ່ານ ຫົວໜ້າກົມ / ຮອງຫົວໜ້າກົມການເງິນ ເປັນຮອງ ທັງເປັນຮອງຜູ້ປະສານງານແຫ່ງຊາດ;
4. ທ່ານ ຫົວໜ້າກົມການສຶກສານອກລະບົບໂຮງຮຽນ ເປັນຄະນະ;
5. ທ່ານ ຫົວໜ້າກົມ/ຮອງຫົວໜ້າກົມສ້າງຄູ ເປັນຄະນະ;
6. ທ່ານ ຫົວໜ້າ/ຮອງຫົວໜ້າອຳນວຍການ ສວສ ເປັນຄະນະ;
7. ທ່ານ ຫົວໜ້າ/ຮອງຫົວໜ້າກົມອາຊີວະ ແລະ ການສຶກສາຊັ້ນສູງ ເປັນຄະນະ;
8. ທ່ານ ຫົວໜ້າ/ຮອງຫົວໜ້າກົມການສຶກສາພາກເອກະຊົນ ເປັນຄະນະ;
9. ທ່ານ ເລຂາຄະນະກຳມາທິການລາວ ເພື່ອຢູເນດສະໂກ ເປັນຄະນະ;
10. ທ່ານ ຫົວໜ້າ/ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ.

## ໝວດທີ່ V
## ແບບແຜນວິທີເຮັດວຽກ

**ມາດຕາ 7. ແບບແຜນວິທີເຮັດວຽກ**

ຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ເຄື່ອນໄຫວວຽກງານ ແບບບໍ່ປະຈຳການ ແລະ ຖືເອົາກອງປະຊຸມເປັນຮູບການເຄື່ອນໄຫວຕົ້ນຕໍ. ກອງປະຊຸມຄົບຄະນະຕາມປົກກະຕິ ຂອງຄະນະດັ່ງກ່າວ ແມ່ນຈັດຂຶ້ນໃນກຳນົດປີລະເທື່ອ; ໃນກໍລະນີຈຳເປັນອາດປະຊຸມຫຼາຍເທື່ອກໍ່ໄດ້. ໃນການຕັດສິນບັນຫາຕ່າງໆ ໃຫ້ຖືເອົາສຽງສ່ວນຫຼາຍເປັນອັນຕັດສິນ.

# ໝວດທີ VI
# ບົດບັນຍັດສຸດທ້າຍ

**ມາດຕາ 8. ການຜັນຂະຫຍາຍ**

ມອບໃຫ້ປະທານຄະນະກຳມາທິການແຫ່ງຊາດ ກ່ຽວກັບການສຶກສາເພື່ອທຸກຄົນ ເປັນຜູ້ຜັນຂະຫຍາຍ, ກຳນົດ, ມອບໝາຍໜ້າທີ່ ແລະ ຄວາມຮັບຜິດຊອບລະອຽດໃຫ້ແກ່ກຳມະການແຕ່ລະທ່ານ ແລະ ໃຫ້ກອງເລຂາ.

**ມາດຕາ 9. ຕາປະທັບ ແລະ ງົບປະມານ**

ຄະນະກຳມາທິການແຫ່ງຊາດ ການສຶກສາເພື່ອທຸກຄົນມີຕາປະທັບເປັນຂອງຕົນເອງ ແລະ ມີງົບປະມານເພື່ອເຄື່ອນໄຫວວຽກງານບໍລິຫານປະຈຳ ໂດຍຂື້ນແຜນລາຍຈ່າຍປະຈຳປີ ນຳຮ່ວງງົບປະມານຂອງກະຊວງສຶກສາທິການ (ກົມສາມັນສຶກສາ).

**ມາດຕາ 10. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ໃຫ້ຄວາມສະດວກ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ເພື່ອປ່ຽນແທນໃຫ້ແກ່ດຳລັດເລກທີ 68/ນຍ, ລົງວັນທີ 24 ມີນາ 2005.

**ນາຍົກລັດຖະມົນຕີ ແຫ່ງ ສ ປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ບົວສອນ ບຸບຜາວັນ**